ASTRA

# Press-Release



ວັນທີ: ມີນາ 2021

# ປົດຖະແຫຼງຂ່າວ ASTRA

## ໂຄງການເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ແລະ ການນຳພາໃນດ້ານການເງິນຂອງພາກການສຶກສາຊັ້ນສູງໃນອາຊີ

ໂຄງການ ASTRA (ໂຄງການເສີມສ້າງຄວາມກ້າວໜ້າທາງດ້ານການຄຸ້ມຄອງຍຸດທະສາດ, ຄວາມເປັນຜູ້ນຳ ແລະ ການລະດົມທຶນໃນການສຶກສາຊັ້ນສູງໃນອາຊີ) ໄດ້ເລີ່ມຕົ້ນຢ່າງເປັນທາງການໃນເດືອນມັງກອນ 2021. ໂຄງການ 3ປີ (ມັງກອນ 2021 - ມັງກອນ 2024) ໄດ້ຮັບທຶນຈາກໂຄງການ Erasmus+ ພາຍໃຕ້ການເສີມສ້າງຄວາມສາມາດໃນພາກສະໜາມຂອງການປະຕິບັດການສຶກສາຊັ້ນສູງ.

### ສະມາຄົມ

ສະມາຄົມດັ່ງກ່າວປະກອບດ້ວຍ 8 ພັນທະມິດຄູ່ຮ່ວມມືທີ່ມາຈາກ 5 ປະເທດໃນທົ່ວສະຫະພາບເອີຣົບ ແລະ ອາຊີຕາເວັນອອກສຽງໃຕ້ ຄື:

- ມະຫາວິທະຍາໄລແຫ່ງຊາດລາວ ( ປະເທດລາວ )
- ມະຫາວິທະຍາໄລສະຫວັນນະເຂດ (ປະເທດລາວ)
- ມະຫາວິທະຍາໄລສົງຂລານະຄະລິນ (ປະເທດໄທ)
- ມະຫາວິທະຍາໄລຊຽງໃໝ່ (ປະເທດໄທ)
- ມະຫາວິທະຍາໄລ Firenze ( ປະເທດອິຕາລີ)
- ມະຫາວິທະຍາໄລເສດຖະສາດ ແລະ ທຸລະກິດ ເອເທັນສ (ປະເທດເກຣັກ )
- Symplexis (ປະເທດເກຣັກ)
- BK Consult (ປະເທດເຢຍລະມັນ)

### ຈຸດປະສົງຕົ້ນຕໍ

ເປົ້າໝາຍໂດຍລວມຂອງ ASTRA ແມ່ນເພື່ອສະໜັບສະໜຸນການດຳເນີນງານຂອງ**ສະຖາບັນການສຶກສາຊັ້ນສູງໃນປະເທດລາວ ແລະ ປະເທດໄທ**, ໂດຍ**ການເພີ່ມຄວາມອາດສາມາດ**ຂອງພະນັກງານໃນການເຂົ້າເຖິງຊັບພະຍາກອນທາງການເງິນຜ່ານໂຄງການຄົ້ນຄວ້າວິໄຈ ແລະ ພັດທະນາທີ່ໄດ້ຮັບທຶນສະໜັບສະໜຸນຈາກຜູ້ໃຫ້ທຶນທີ່ກ່ຽວຂ້ອງໃນ**ດ້ານ ICT ແລະ ວິທະຍາສາດສັງຄົມ**. ໃນຂອບເຂດການເຮັດວຽກຂອງ ASTRA, ໂຄງການເຝິກອົບຮົມຮອບດ້ານຈະໄດ້ຮັບການພັດທະນາໂດຍໄດ້ຮັບການສະໜັບສະໜຸນຈາກບັນດາພັນທະມິດຜູ້ຊ່ຽວຊານຂອງສະຫະພາບເອີຣົບ ແລະ ຍິ່ງໄປກວ່ານັ້ນ ສູນ R&D ໃໝ່ 4 ແຫ່ງຈະຖືກສ້າງຕັ້ງຂຶ້ນຢູ່ໃນ 4 ສະຖາບັນພັນທະມິດເຊິ່ງການດຳເນີນງານຈະໄດ້ຮັບການຈັດການໂດຍນັກວິຊາການທີ່ໄດ້ຮັບການເຝິກອົບຮົມໃໝ່.

ໄລຍະທຳອິດຂອງການຈັດຕັ້ງປະຕິບັດໂຄງການແມ່ນຄາດວ່າຈະແກ່ຍາວໄປຮອດລະດູຝົນປີ 2021 ແລະ ກ່ຽວຂ້ອງກັບການທົບທວນເອກະສານ ແລະ ການລົງເກັບກຳຂໍ້ມູນກ່ຽວກັບຄວາມຕ້ອງການ ແລະ ທັກສະທີ່ຈຳເປັນໃນການກຳນົດບັນດາສະຖາບັນການສຶກສາຊັ້ນສູງໃນລາວ ແລະ ໄທ. ຜົນການຄົ້ນຄວ້າ ເຊິ່ງໄດ້ມາຈາກການສຳພາດ ແລະ ການສົນທະນາກຸ່ມ ຈະຖືກເຜີຍແຜ່ເປັນບົດລາຍງານແຍກເປັນແຕ່ລະປະເທດ ແລະ ຈະສາມາດດາວໂຫຼດໄດ້ຟຣີ. ຜົນການຄົ້ນຄວ້າດັ່ງກ່າວນີ້ຍັງເປັນພື້ນຖານສຳຫຼັບການພັດທະນາໂປຣແກຣມການຝຶກອົບຮົມເຊິ່ງຈະເປັນເປົ້າໝາຍໄປທີ່ ພະນັກງານໃນສະຖາບັນການສຶກສາຊັ້ນສູງຂອງທັງສອງປະເທດ.

UNIVERSITÀ DEGLI STUDI FIRENZE

ATHENS UNIVERSITY OF ECONOMICS AND BUSINESS

symplexis

BK·CON


info@symplexis.eu
www.symplexis.eu


**astra-project.eu**


Co-funded by the Erasmus+ Programme of the European Union

This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-l-2020-1-LA-EPPKA2-CBHE-JP


symplexis